"ຫຼາກຫຼາຍສີສັນ" ໃນໝາກໄມ້ຫ່ອຍໜຶ່ງ

ວັນທີ 28 ກຸມພາຜ່ານມາ, ປອ. ລິງເວີຍ ພິທີກອນ ມຽນມາ ຂອງສູນການສື່ສານສາກົນ ພາກພື້ນ ອາຊີໃຕ້ - ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ ໄດ້ເດີນທາງໄປເຖິງຮ້ານນ້ຳປັ່ນ "ນິວຄາຊາຊາ" ທີ່ເປັນຮ້ານນ້ຳປັ່ນທີ່ມີຊື່ສຽງໂດ່ງດັງໃນອິນເຕີເນັດ ທີ່ຕັ້ງຢູ່ເມືອງປົກຄອງຕົນເອງເຜົ່າລີ້-ເຜົ່າລາຫູ-ເຜົ່າວາ ເມືອງເມັ່ງລຽນ (Menglian) ນະຄອນຜູເອີ (Pu'er), ນ້ຳປັ່ນ "ນິວຄາ" ທີ່ປະກອບດ້ວຍກາເຟ, ນົມງົວ ແລະ ໝາກອາໂວກາໂດປັ່ນ ທັງຫວານທັງນຸ້ມດີ; ໝາກອາໂວກາໂດຊອຍເປັນແຜ່ນບາງໆ, ຈ້ຳແจ່ວອະຊະບິ ຫຼື ນ້ຳເຜິ້ງ, ນຸ້ມປານຕັບທ່ານ; ນອກນີ້, ຍັງມີນ້ຳຫວານອາໂວກາໂດ, ເຂົ້າໜົມອາໂວກາໂດ ແລະ ພິດຊາອາໂວກາໂດ ເຫຼົ່ານີ້ເປັນຕົ້ນ, ອາຫານປະເພດຕ່າງໆ ທີ່ເຮັດດ້ວຍໝາກອາໂວກາໂດ ເຮັດໃຫ້ ທ່ານ ລິງເວີຍ ຮູ້ສຶກປະຫຼາດໃຈຫຼາຍ.

ທ່ານ ນາງ ວາງແຢ້ນ (Wan Yan) ຜູ້ອຳນວຍການໃຫຍ່ ບໍລິສັດຕ່ອງໂສ້ສະໜອງສິນຄ້າກະສິກຳ ເມັ່ງລຽນ ຈຳກັດ ກ່າວວ່າ: ປັດຈຸບັນ, ເຮົາບໍ່ພຽງແຕ່ກິນໝາກອາໂວກາໂດເປັນຫ່ວຍເທົ່ານັ້ນ, ສູນຈໍລະຈອນສິນຄ້າແຊ່ເຢັນໝາກໄມ້ ແລະ ຜັກສົດເມືອງເມັ່ງລຽນ ໄດ້ສ້າງສຳເລັດ ແລະ ເປີດນຳໃຊ້ໃນທ້າຍປີ 2022, ສາຍຜະລິດແປ້ງໝາກອາໂວກາໂດ ແລະ ເຄື່ອງດື່ມໝາກອາໂວກາໂດ ກຽມຈະປະຕິບັດງານ ແບບທົດລອງ ໃນທ້າຍເດືອນມີນາປີນີ້.

ເປັນຫຍັງໝາກໄມ້ນ້ອຍໆ ຫ່ວຍໜຶ່ງ ສາມາດຜະລິດເປັນຜະລິດຕະພັນປະເພດຕ່າງໆ ຫຼາຍປານນີ້? ວັນທີ 29 ກຸມພາຜ່ານມາ, ທ່ານ ລິງເວີຍ ໄດ້ຄົ້ນພົບຄຳຕອບຢູ່ສູນປູກໝາກອາໂວກາໂດ ບ້ານມາງຊິນ ຕາແສງມາງຊິນ(Mangxin) ເມືອງເມັ່ງລຽນ.

ຢູ່ເທິງຕົ້ນໝາກອາໂວກາໂດໃນສູນ, ດອກໄມ້ສີເຫຼືອງບໍ່ໃຫຍ່ປານໃດ, ທ່ານ ຈ້າວຊີມິນ (Zhao Shimin) ຮອງຜູ້ອຳນວຍການໃຫຍ່ ບໍລິສັດຊີວະພາບລຸ້ຍຢິນຜູເອີ ຈຳກັດໄດ້ບອກທ່ານ ລິງເວີຍ ວ່າ, ນີ້ກໍແມ່ນ ດອກອາໂວກາໂດ!

ດອກໄມ້ເບັ່ງບານແລ້ວ ກໍມີໝາກອາໂວກາໂດ ເຕີບໃຫຍ່ຂຶ້ນ, ຕົ້ນໝາກອາໂວກາໂດຕົ້ນໜຶ່ງ ສາມາດຜະລິດໝາກໄດ້ 1.300 ກວ່າຫ່ວຍຕໍ່ປີ. ເມື່ອທຽບໃສ່ໝາກອາໂວກາໂດ ທີ່ນຳເຂົ້າຈາກຕ່າງປະເທດ ທີ່ຕ້ອງເດີນເຮືອເປັນເວລາ 30 ວັນ ຂຶ້ນໄປແລ້ວ, ໝາກອາໂວກາໂດຂອງເມືອງເມັ່ງລຽນ ສຸກຢູ່ເທິງຕົ້ນ, ຈະມີລົດຊາດທີ່ດີກວ່າ ແລະ ມີໂປຣຕີນຫຼາຍກວ່າ.

ປີ 2007, ທ່ານ ສີເจ່ຍຈູ້ (Qi Jiazhu) ຜູ້ອຳນວຍການໃຫຍ່ບໍລິສັດລຸ້ຍຢິນ ໄດ້ປູກຕົ້ນອາໂວກາໂດ ຕົ້ນທຳອິດຢູ່ເມືອງເມັ່ງລຽນ. ເຖິງວ່າສະພາບດິນຟ້າອາກາດ ແລະ ເງື່ອນໄຂທຳມະຊາດ ເມືອງເມັ່ງລຽນເໝາະສົມສຳລັບການເຕີບໃຫຍ່ຂອງຕົ້ນອາໂວກາໂດທີ່ສຸດ, ແຕ່ຢາກໃຫ້ມັນ"ເຕີບໃຫຍ່ຂະຫຍາຍຕົວ" ຢ່າງແທ້ຈິງຢູ່ແຫ່ງນີ້ແມ່ນບໍ່ງ່າຍ, ເຊິ່ງບໍລິສັດລຸ້ຍຢິນ ໄດ້ຄົ້ນຄວ້າເປັນສິບກວ່າປີ ໃນດ້ານເພາະພັນ, ປູກ ແລະ ການເຜີຍແຜ່ເຕັກນິກອື່ນໆ ທີ່ກ່ຽວຂ້ອງ.

ທ່ານ ຈ້າວຊີມິນ ກ່າວວ່າ: "ປະຊາຊົນເຂດນັ້ນ ບໍ່ຮູ້ວ່າໝາກອາໂວກາໂດ ເປັນແນວໃດ, ບໍ່ເຊື່ອວ່າ, ຈະສ້າງຄວາມຮັ່ງມີດ້ວຍການປູກໝາກອາໂວກາໂດ, ແຕ່ວ່າ, ປັດຈຸບັນລາຍຮັບສະເລ່ຍຕໍ່ຫົວຄົນ ໄດ້ເພີ່ມຂຶ້ນຫຼາຍເທົ່າ, ຫຼາຍຄົນໄດ້ກາຍເປັນນັກວິຊາການຊຳນານແລ້ວ."

ຢູ່ສູນປູກໝາກ, ທ່ານ ລິງເວີຍ ຍັງໄດ້ຮູ້ຈັກກັບຄຳສັບໃໝ່ກ່ຽວກັບໝາກອາໂວກາໂດຈຳນວນໜຶ່ງ. ເຊັ່ນ: ກອງບັນຊາການສ້າງໂຄງການພັດທະນາໝາກອາໂວກາໂດ "ເມືອງໜຶ່ງອຸດສາຫະກຳໜຶ່ງ" ຂອງເມືອງເມັ່ງລຽນ ເຊິ່ງໄດ້ຈັດສັນກຳລັງຂອງພາກສ່ວນຕ່າງໆຂອງເມືອງເມັ່ງລຽນ ເພື່ອຮັບໃຊ້ອຸດສາຫະກຳປູກຕົ້ນໝາກອາໂວກາໂດ, ວຽກງານຈຸດໜັກໄດ້ຈາກການປູກຕົ້ນໄມ້ໃຫ້ໝາກ ຂະຫຍາຍໄປສູ່ລະບົບປຸ່ງແຕ່ງ ແລະ ການພັດທະນາແບບເຊື່ອມໂຍງລະຫວ່າງອຸດສາຫະກຳທີ 1, ອຸດສາຫະກຳທີ 2 ແລະ ອຸດສາຫະກຳທີ 3.

ຍັງມີ "ບ້ານ Freshipo". ບ້ານມາງຊິນ ເມືອງເມັ່ງລຽນ ເປັນ "ບ້ານ Freshippo" ທີ່ສະໜອງໝາກອາໂວກາໂດ ບ້ານທຳອິດຂອງຈີນ, ທ່ານ ໂຮຢຸ້ຍ (Hou Yu) ນັກທຸລະກິດຈັດຊື້ໝາກໄມ້ສຳລັບບໍລິສັດ Freshippo ກ່າວວ່າ, ໝາກອາໂວກາໂດ ເມືອງເມັ່ງລຽນ ຈາກສວນໄປເຖິງຄອບຄົວລູກຄ້າ ຕົວເມືອງໃຫຍ່ຕ່າງໆຂອງຈີນ ຕ້ອງໃຊ້ເວລາພຽງ 72 ຊົ່ວໂມງເທົ່ານັ້ນ. ປັດຈຸບັນ, ການຈຳໜ່າຍ ໝາກອາໂວກາໂດ ເມືອງເມັ່ງລຽນ ຢູ່ຕາມບໍລິສັດ Freshippo ໄດ້ປົກຄຸມ 28 ຕົວເມືອງຂອງຈີນແລ້ວ.

ປັດຈຸບັນນີ້, ຄົນທັງຫຼາຍໄດ້ເຂົ້າຮ່ວມການປູກ, ການປຸງແຕ່ງ, ການຂົນສົ່ງ, ການຈຳໜ່າຍ ແລະ ການໂຄສະນາເຜີຍແຜ່ ໝາກອາໂວກາໂດ ນັບມື້ນັບຫຼາຍຂຶ້ນ, ຄວາມສູ້ຊົນຜ່ານຜ່າຂອງຊາວເມືອງເມັ່ງລຽນ ໄດ້ເພີ່ມພະລັງຂັບເຄື່ອນຢ່າງບໍ່ຂາດສາຍ ໃຫ້ແກ່ການພັດທະນາອຸດສາຫະກຳ ການຜະລິດໝາກອາໂວກາໂດ.

ຂ່າວ: Liu Ziyu, Guo Yao, Li Wenjun; ພາບໂດຍ: Zhang Ruogu, Guo Yao, Shen Hao, Hu Meijun

"ຂ້ອຍມີຄວາມໝັ້ນໃຈເຕັມປ່ຽມຕໍ່ອະນາຄົດ"

ເມື່ອຫວນຄືນປະສົບການຮຽນຕໍ່ຢູ່ຈີນ, ທ້າວ ຫົວຢ້າວເວີນ (ແປຕາມພາສາຈີນ) ນັກສຶກສາລາວ ເວົ້າວ່າ: "ການດຳລົງຊີວິດຢູ່ຈີນ ສະດວກສະບາຍທີ່ສຸດ ແລະ ຍັງມີແຫຼ່ງທ່ອງທ່ຽວຫຼາຍບ່ອນເປັນຕາໄປທ່ຽວຫຼາຍ. ຂ້ອຍໄດ້ຊົມວິວທະເລຢູ່ນະຄອນຣີ້ຈ້າວ (Rizhao) ແຂວງຊານຕົງ (Shandong) ທີ່ບໍ່ເຄີຍເຫັນຢູ່ລາວ. ຕໍ່ໄປພາຍໜ້າ, ຂ້ອຍຈະພະຍາຍາມຂໍທຶນການສຶກສາໄປຮຽນປະລິນຍາໂທ ຢູ່ຈີນອີກ."

ປີ 2018, ທ້າວ ຫົວຢ້າວເວີນ ໄດ້ໄປຮຽນຂະແໜງວິຊາການບໍລິການ ແລະ ການຄຸ້ມຄອງການຈໍລະຈອນສິນຄ້າ ຢູ່ວິທະຍາໄລເຕັກນິກວິຊາຊີບວິສະວະກຳຈ່ຽງຊູ (Jiangsu) ຈີນ ດ້ວຍທຶນການສຶກສາ. ປີ 2021, ລາວ ໄດ້ເປີດບໍລິສັດຈິງທິງຂົນສົ່ງດ່ວນ ຫຼື ZTO EXPRESS ສາຂານະຄອນຫຼວງວຽງຈັນ ພາຍຫຼັງຮຽນຈົບຈາກຈີນ.

ທ້າວ ຫົວຢ້າວເວີນ ກ່າວວ່າ: "ຕອນຫາກໍ່ກັບຈາກຈີນ, ຂ້ອຍບໍ່ມີທຶນ, ເລີຍເຮັດທຸລະກິດຊື້ເພື່ອລູກຄ້າກ່ອນ. ຕອນຊື້ ຫຼື ສົ່ງສິນຄ້າ, ຈະຕິດຕໍ່ພົວພັນກັບບໍລິສັດສົ່ງເມດ່ວນຕ່າງໆ ເລື້ອຍໆ, ຂ້ອຍໄດ້ລົງເລິກຄົ້ນຄວ້າເວລາ, ລາຄາ ແລະ ການບໍລິການສົ່ງສິນຄ້າຂອງບໍລິສັດແຫ່ງຕ່າງໆ ຢ່າງເລິກເຊິ່ງແລ້ວ, ຂ້ອຍຕັດສິນໃຈເຂົ້າຮ່ວມບໍລິສັດຈິງທິງ." ລາວ ກ່າວຕື່ມອີກว່າ, ຂ້ອຍໄດ້ຈ້າງພະນັກງານສອງຄົນ, ນອກຈາກຄ່າເຊົ່າເຮືອນ ແລະ ເງິນເດືອນພະນັກງານ, ບວກກັບການເຮັດທຸລະກິດຊື້ເພື່ອລູກຄ້າ, ຜົນກຳໄລສຸດທິຕໍ່ເດືອນມີເຖິງຫຼາຍພັນຢວນ.

ປັດຈຸບັນ, ຈຳນວນທຸລະກິດຂອງບໍລິສັດ ທ້າວ ຫົວຢ້າວເວີນ ໃນເດືອນໜຶ່ງ ມີປະມານ 3.000 ກວ່າລາຍການ ແລະ ຖືການສົ່ງສິນຄ້າເປັນຕົ້ນຕໍ. ເພື່ອເພີ່ມຈຳນວນທຸລະກິດໃຫ້ສູງຂຶ້ນ, ລາວ ໄດ້ໄປຢ້ຽມຢາມໂຮງແຮມ, ຮ້ານຄ້າ ແລະ ບາເຫຼົ້າ ຢູ່ບໍລິເວນໃກ້ຄຽງ ເພື່ອຕັ້ງໜ້າບຸກເປີກຊັບພະຍາກອນລູກຄ້າ. ລາວກ່າວວ່າ: "ການສົ່ງເມດ່ວນຢູ່ລາວຕົ້ນຕໍ ແມ່ນການຂົນສົ່ງສິນຄ້າທົ່ວໄປຂ້າມຊາດ, ການສົ່ງສິນຄ້າຫຼາຍກວ່າ, ແຕ່ການສົ່ງເມດ່ວນພາຍໃນປະເທດອ່າວໜ້ອຍ. ກະເປົາທີ່ຈີນສົ່ງໄປລາວ ສ່ວນຫຼາຍຕ້ອງການສົ່ງໄປເຖິງສາງຈີນ ທີ່ໃກ້ກັບປະເທດລາວ ແລ້ວສົ່ງຕໍ່ໄປປະເທດລາວ. ຂ້ອຍຈະບອກລູກຄ້າວ່າ, ໃນເວລາສັ່ງຊື້ສິນຄ້າ ຕາມອິນເຕີເນັດ, ຈະໝາຍໄວ້ວ່າ, ສົ່ງໄປເຖິງສາງຄຸນໝິງ, ສາງກວາງໂຈ່ວ, ສາງຢີ້ອູ ຫຼື ສ້າງຮວຍຮວ້າຂອງບໍລິສັດຈິງທິງ. ຖ້າລູກຄ້າໃຊ້ຈິງທິງແລ້ວ, ຕາມທຳມະດາ, ເຂົາເຈົ້າຈະໃຊ້ຕໍ່ໄປ ແລະ ສະເໜີໃຫ້ລູກຄ້າຄົນອື່ນໃຊ້ຄືກັນ."

ທ້າວ ຫົວຢ້າວເວີນ ກ່າວວ່າ: "ໃນຊຸມປີຜ່ານມາ, ເສດຖະກິດ ທຸລະກິດເອເລັກໂຕຣນິກ ຂອງປະເທດລາວ ໄດ້ພັດທະນາຢ່າງວ່ອງໄວ, ຂ້ອຍມີຄວາມໝັ້ນໃຈເຕັມປ່ຽມຕໍ່ອະນາຄົດ." ລາວ ເຫັນວ່າ, ຄຽງຄູ່ກັບລາວ ແລະ ຈີນ ເລັ່ງຊຸກຍູ້ການຮ່ວມກັນສ້າງ "ໜຶ່ງແລວ ໜຶ່ງເສັ້ນທາງ", ວຽກງານຈໍລະຈອນສິນຄ້າຂອງຕົນ ກໍຈະໄດ້ຮັບໂອກາດພັດທະນາທີ່ດີກວ່າເກົ່າຢ່າງແນ່ນອນ.

ແຫຼ່ງຂ່າວ: ບັນຊີວິແຊັດ ທາງການ ZTO EXPRESS

ໄປເລາະຕະຫຼາດນັດໃນລະດູບານໃໝ່

ລະດູບານໃໝ່ໝູນວຽນມາເຖິງ, ດອກໄມ້ສີຂາວເບັ່ງບານຕາມສອງຟາກຝັ່ງແມ່ນ້ຳລ້ານຊ້າງ. ພໍດີແມ່ນວັນທ້າຍສັບປະດາ, ພີ່ນ້ອງທັງຫຼາຍໄດ້ມຸ່ງໜ້າໄປເລາະຕະຫຼາດນັດໃນລະດູບານໃໝ່ຖະໜົນລ້ານຊ້າງທີ່ຍາວ 800 ກວ່າແມັດ ທີ່ຕັ້ງຢູ່ຕາແສງລາຫູ ເມືອງປົກຄອງຕົນເອງເຜົ່າລາຫູລ້ານຊ້າງແຂວງຢຸນນານຈີນ.

ໝາກບີ, ດອກເອື້ອງ,ດອກກ້ວຍ ແລະ ດອກໄມ້ຕ່າງໆ ທີ່ເບັ່ງບານຢູ່ຕາມພູຜາຍັງງົດງາມຄືເກົ່າ ຢູ່ໃນຕະຫຼາດນັດ, ໝາກອາໂວກາໂດ, ກາເຟ, ນ້ຳເຜິ້ງປ່າ, ຜັກເຊເລີລີນ້ຳ ເປັນຕົ້ນ, ຜະລິດຕະພັນທີ່ມີເອກະລັກພິເສດຂອງເມືອງອ້ອມຂ້າງ ເຊັ່ນ: ເມືອງເມັ່ງລຽນ, ເມືອງຊີເໝິງ, ເມືອງເມັ່ງໄຫ ແລະ ນະຄອນຊຽງຮຸ່ງເປັນຕົ້ນ ລ້ວນແຕ່ໄດ້ນຳມາວາງຂາຍໃນຕະຫຼາດນັດ.

ເມືອງລ້ານຊ້າງ ມີຊົນເຜົ່າສ່ວນໜ້ອຍຫຼາຍຊົນເຜົ່າ, ຕອນບ່າຍຂອງທຸກໆວັນເສົາ, ຄົນທັງຫຼາຍຈະນຳເອົາຜະລິດຕະພັນກະສິກຳຂອງຕົນ ມາວາງຂາຍໃນຕະຫຼາດນັດ. ປົ້ງປາເຜົ່າລີ້ທີ່ສົດໆຮ້ອນໆ, ຕຳໝາກເຜັດເຜົ່າລາຫູທີ່ເຜັດໆຮ້ອນໆ, ເຂົ້າປຸກເຂົ້າຊິ້ນໄກ່ເຜົ່າວາທີ່ອ່ອນນຸ້ມ, ຕັ້ງແຕ່ເຊົ້າຈົນ ເຖິງທ່ຽງ ຄືນ, ຖະໜົນ 6 ເສັ້ນທີ່ມີເອກະລັກພິເສດຂອງໃຜຂອງມັນ ແລະ ອາຫານພື້ນເມືອງ ທັງແຊບ ທັງລາຄາຖືກ ເຮັດໃຫ້ຕະຫຼາດນັດແຫ່ງນີ້ ກາຍເປັນ "ພໍພີພີທະພັນ" ອາຫານການກິນຊົນເຜົ່າສ່ວນໜ້ອຍຂອງແຂວງຢຸນນານ.

ຂ່າວ / ພາບໂດຍ: Wang Yi

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນ ພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com